# ຊາວໜຸ່ມ ທຄຕລ ເຂົ້າຮ່ວມຂະບວນການອາສາສະໝັກຊາວໜຸ່ມຕະລຸມບອນ ບໍລິຈາກເລືອດປະຈໍາປີ 2016

ໃນວັນພະຫັດ ທີ **26/05/2016** ເວລາ 7:30 – 15:00 ໂມງ ທີ່ **ສູນກາງຊາວໜຸ່ມ ປະຊາຊົນ ປະຕິວັດລາວ** ໄດ້ມີການເຂົ້າຮ່ວມບໍລິຈາກເລືອດຂອງບັນດາ ສະມາຊິກຊາວໜຸ່ມ ແລະ ອາສາສະໝັກຊາວໜຸ່ມຕະລຸມບອນ ພາຍໃນຮາກຖານ ໂດຍການການປຸກລະດົມ, ຂົນຂວາຍຂອງຄະນະບໍລິຫານງານຊາວໜຸ່ມ ທຫລ ເພື່ອເຂົ້າຮ່ວມ **ຂະບວນການອາສາສະໝັກ ຊາວໜຸ່ມຕະລຸມບອນ ບໍລິຈາກເລືອດປະຈໍາປີ 2016** ເນື່ອງໃນໂອກາດສະເຫຼີມສະຫຼອງ **ວັນສ້າງຕັ້ງ ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຄົບຮອບ 61 ປີ** ເຊິ່ງໄດ້ມີການເຂົ້າຮ່ວມຂອງສະມາຊິກຊາວໜຸ່ມຈາກຫຼາຍພາກສ່ວນ ເຊັ່ນ: ອົງການຈັດຕັ້ງແລະບັນດາກະຊວງຕ່າງໆ, ທະນາຄານທຸລະກິດລັດ, ນັກຮຽນ-ນັກສຶກສາ ແລະ ປະຊາຊົນຈໍານວນໜຶ່ງ. ໃນນັ້ນ ໄດ້ມີການເຂົ້າຮ່ວມຂອງສະມາຊິກຊາວໜຸ່ມ **ທຄຕລ** ທັງໝົດຈໍານວນ **18** ສະຫາຍ, ຍິງ **6** ສະຫາຍ ( ສາຂາ ນະຄອນຫຼວງ **1** ສະຫາຍ ແລະ ສາຂາດົງໂດກ **4** ສະຫາຍ ).

ການບໍລິຈາກເລືອດຂອງບັນດາສະມາຊິກຊາວໜຸ່ມຕະລຸມບອນໄດ້ຮັບຄວາມສົນໃຈຫຼາຍຈາກບັນດາພາກສ່ວນຕ່າງໆ ເຊິ່ງສັງເກດໄດ້ຈາກຈໍານວນສະມາຊິກຊາວໜຸ່ມທີ່ເຂົ້າຮ່ວມການບໍລິຈາກເລືອດຂອງແຕ່ລະພາກສ່ວນແມ່ນເພີ່ມຂຶ້ນຖ້າທຽບໃສ່ປີຜ່ານມາ. ພ້ອມນີ້ ຍັງມີກິດຈະກໍາການແຈກເຄື່ອງທີ່ລະນຶກຕ່າງໆ ແລະ ເຕັມໄປດ້ວຍບັນຍາກາດທີ່ຟົດຟື້ນ ສະແດງເຖິງນໍ້າໃຈການຊ່ວຍເຫຼືອເພື່ອນມະນຸດດ້ວຍກັນ ແລະ ຄວາມສາມັກຄີ ເປັນປຶກແຜ່ນຂອງບັນດາສະມາຊິກຊາວໜຸ່ມ ສະແດງເຖິງກໍາລັງແຮງງານຂອງຊາວໜຸ່ມມີຄວາມເຂັ້ມແຂງ ແລະ ມີຄວາມພ້ອມທີ່ຈະຊ່ວຍເຫຼືອໃນຍາມທີ່ສັງຄົມມີຄວາມຮຽກຮ້ອງຕ້ອງການ.






ພາບ: ອານຸລັກ ສຸວັດດີ; ຂຽນຂ່າວ: ສຸລິຍົງ ສຸກຈັນດີ